ປົດຂ່າວ

ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ໄຕມາດ 3 ປີ 2020

ໃນວັນທີ 28-29 ຕຸລາ 2020 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳໄຕມາດ 3 ປີ 2020 ທີ່ ໂຮງແຮມຫຼວງພະບາງວິວ ນະຄອນຫຼວງພະບາງ ພາຍໃຕ້ການເປັນປະທານຂອງ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ໂດຍມີຄະນະອຳນວຍການ, ບັນດາພະແນກ-ສູນ ແລະ ສາຂາໃນທົ່ວລະບົບ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ລວມທັງໝົດ 50 ທ່ານ.



ກອງປະຊຸມໄດ້ຕີລາຄາຜົນການດຳເນີນທຸລະກິດຂອງ ທຄຕລ ປີ 2020 ລົງເລິກວິເຄາະແຕ່ລະດ້ານຂອງທຸລະກິດ ແລະ ການບໍລິການຂອງ ທຄຕລ, ສະຫຼຸບກ່ຽວກັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕໍ່ ທຄຕລ ເພື່ອຄົ້ນຄວ້າ ແລກປ່ຽນບົດຮຽນ ແລະ ປຶກສາຫາລືຫາວິທີການແກ້ໄຂຂໍ້ຫຍຸ້ງຍາກ ແລະ ແກ້ໄຂຂໍ້ສະເໜີຕ່າງໆຂອງ ທຄຕລ ສຳນັກງານໃຫຍ່ ແລະ ບັນດາສາຂາ ເປັນຕົ້ນແມ່ນ: ວຽກງານການຄຸ້ມຄອງບໍລິຫານສິນເຊື່ອ, ການເອົາໃຈໃສ່ແກ້ໄຂໜີ້ຂອງລູກຄ້າສິນເຊື່ອ, ຜົນກະທົບບັນຫາອັດຕາແລກປ່ຽນ, ວຽກງານການບໍລິການລູກຄ້າລາຍໃຫຍ່, ວຽກງານການບໍລິຫານເງິນສົດ, ວຽກງານການສົ່ງເສີມດ້ານການຕະຫຼາດ ແລະ ການຂະຫຍາຍຜະລິດຕະພັນ, ການຂະຫຍາຍຕາໜ່າງບໍລິການ, ວຽກງານບຸກຄະລາກອນ, ວຽກງານດ້ານນິຕິກຳ, ການຄຸ້ມຄອງຄວາມສ່ຽງ ແບບໃໝ່ການຄຸ້ມຄອງລະບົບໄອທີ ແລະ ວິທີການຄຸ້ມຄອງຄວາມປອດໄພຂອງຕູ້ ATM. ທັງໝົດນັ້ນ ກໍ່ເພື່ອແນ່ໃສ່ເຮັດໃຫ້ການດຳເນີນທຸລະກິດມີຜົນກຳໄລ ແລະ ສາມາດແບ່ງປັນຜົນກຳໄລໃຫ້ບັນດາຜູ້ຖືຮຸ້ນ.



ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບທິດຊີ້ນຳໃນການປະຕິບັດວຽກງານຕ່າງໆຈາກຄະນະອຳນວຍການ, ຮັບຮູ້ທິດທາງໃນການດຳເນີນງານຂອງ ທຄຕລ ໄລຍະໄຕມາດ 4/2020 ເພື່ອບັນດາສາຂາພ້ອມກັນນຳເອົາເນື້ອໃນຈິດໃຈກອງປະຊຸມໄປເຜີຍແຜ່ ຜັນຂະຫຍາຍໃນການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

